**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 0799 /ກປ

ນະຄອນຫຼວງວຽງຈັນ, ວັນທີ 23 JUN 2021

# ຄຳສັ່ງ

## ກ່ຽວກັບ ການຊຸກຍູ້, ສົ່ງເສີມ ຂະບວນການລ້ຽງງົວ ແລະ ຄວາຍ ເພື່ອສົ່ງອອກໄປ ສປ ຈີນ

**ເຖິງ:** - ທ່ານ ຫົວໜ້າຫ້ອງການ, ບັນດາກົມ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ສະບັບປັບປຸງ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້;
- ອີງຕາມ ການນຳສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 1294/ກລປ, ລົງວັນທີ 2 ມິຖຸນາ 2021.

ການຈັດຕັ້ງປະຕິບັດແຜນງານຜະລິດກະສິກຳເປັນສິນຄ້າ ແມ່ນມີຄວາມສຳຄັນ ແລະ ເປັນແຜນງານບຸລິມະສິດ ເພື່ອສະໜັບສະໜູນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ເວົ້າລວມ, ເວົ້າສະເພາະ ແມ່ນສ້າງລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າຢູ່ເຂດຊົນນະບົດ ໃຫ້ຄ່ອຍໆຫຼຸດພົ້ນອອກຈາກຄວາມທຸກຍາກ ເທື່ອລະກ້າວ. ພາຍໃຕ້ຂອບການຮ່ວມມືເພື່ອນມິດຍຸດທະສາດ ຂອງ ລັດຖະບານ ສປປ ລາວ ແລະ ສປ ຈີນ; ລັດຖະບານ ສປປ ລາວ ໄດ້ຮັບໂກຕ້າສົ່ງອອກ ງົວ, ຄວາຍ ຈາກລັດຖະບານ ສປ ຈີນ ຈຳນວນ 500.000 ໂຕ ເພື່ອຊ່ວຍສ້າງວຽກເຮັດງານທຳ ໃຫ້ແກ່ປະຊາຊົນລາວ ຈາກການລ້ຽງງົວ, ຄວາຍ ເປັນສິນຄ້າສົ່ງອອກ ໄປ ສປ ຈີນ ແນ່ໃສ່ສ້າງລາຍຮັບທີ່ໝັ້ນທ່ຽງ ແລະ ປະກອບສ່ວນສ້າງເສດຖະກິດຄອບຄົວ ຂອງປະຊາຊົນລາວ ໃຫ້ດີຂຶ້ນເທື່ອລະກ້າວ.

ເພື່ອຈັດຕັ້ງປະຕິບັດແຜນງານຜະລິດກະສິກຳເປັນສິນຄ້າ ກໍ່ຄືການລ້ຽງງົວ, ຄວາຍ ສົ່ງອອກໃຫ້ໄດ້ຕາມແຜນການ, ໃນວັນທີ 30 ເມສາ 2019 ສອງປະເທດລາວ ແລະ ຈີນ ໄດ້ບັນລຸຂໍ້ກຳນົດວ່າດ້ວຍເງື່ອນໄຂດ້ານສຸຂະນາໄມ ກ່ຽວກັບການກັກກັນ ແລະ ກວດສຸຂະພາບສັດໃຫຍ່ ທີ່ສົ່ງອອກຈາກ ສປປ ລາວ ໄປ ສປ ຈີນ ແລະ ໃນວັນທີ 20 ມັງກອນ 2021 ສປ ຈີນ ໄດ້ຮັບຮອງເອົາເຂດປອດພະຍາດປາກເປື່ອຍລົງເລັບ ຢູ່ ເມືອງສິງ ແຂວງຫຼວງນໍ້າທາ ຢ່າງເປັນທາງການ. ຫຼັງຈາກນັ້ນ ກໍ່ໄດ້ມີການກະກຽມໃນດ້ານຕ່າງໆ ຈົນມາຮອດວັນທີ 28 ເມສາ 2021 ຫາ ວັນທີ 4 ພຶດສະພາ 2021 ທັງສອງຝ່າຍ ກໍ່ໄດ້ດຳເນີນການສົ່ງ ງົວ, ຄວາຍ ອອກຈາກ ສປປ ລາວ ໄປ ສປ ຈີນ ຜ່ານດ່ານທ້ອງຖິ່ນ ປາງໄຮ ເມືອງສິງ ແຂວງຫຼວງນໍ້າທາ ຈຳນວນ 2.013 ໂຕ ເພື່ອເປັນການທົດລອງລະບົບ, ໂດຍມາຮອດປະຈຸບັນນີ້ ພວກເຮົາພວມສຸມໃສ່ກະກຽມງົວ, ຄວາຍ ເພື່ອສົ່ງອອກເປັນຊຸດຕໍ່ໄປ.

ກະຊວງກະສິກຳ ແລະ ປ່າໄມ້ ເຫັນໄດ້ເຖິງຄວາມສຳຄັນ ຂອງການລ້ຽງງົວ, ຄວາຍ ເພື່ອສົ່ງອອກໄປຕະຫຼາດ ສປ ຈີນ ແລະ ຖືເປັນກາລະໂອກາດດີທີ່ສຸດ ຂອງ ສປປ ລາວ. ແຕ່ເຖິງຢ່າງໃດກໍຕາມ ພວກເຮົາ ກໍຍັງມີຂໍ້ຈຳກັດ ໃນການພັດທະນາການລ້ຽງງົວ, ຄວາຍ ຢູ່ປະເທດເຮົາໃນຫຼາຍໆດ້ານ ເປັນຕົ້ນ ແມ່ນດ້ານປະລິມານ ແລະ ຄຸນນະພາບ ເພື່ອໃຫ້ໄດ້

ຕາມມາດຕະຖານ ທີ່ ຝ່າຍ ສປ ຈີນ ຕ້ອງການ, ສະນັ້ນ ເພື່ອເປັນການປຸກລະດົມ ຂະບວນການລ້ຽງງົວ, ຄວາຍ ຂອງ ສປປ ລາວ ເພື່ອສົ່ງອອກໄປ ສປ ຈີນ ໃຫ້ເປັນຂະບວນຟົດຟື້ນ ແລະ ກວ້າງຂວາງ ໃນຂອບເຂດທົ່ວປະເທດ ນັ້ນ,

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຄຳສັ່ງ:**

1. ໃຫ້ບັນດາກົມ, ສະຖາບັນ ທີ່ກ່ຽວຂ້ອງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງການໂຄສະນາເຜີຍແຜ່ ໃຫ້ການຈັດຕັ້ງພາກລັດ ແລະ ເອກະຊົນ, ຊາວກະສິກອນ ແລະ ຜູ້ປະກອບການ ໃນຂອບເຂດທົ່ວປະເທດ ໃຫ້ຊາບທົ່ວເຖິງກັນວ່າ: ໃນປະຈຸບັນ ສປ ຈີນ ໄດ້ເປີດຕະຫຼາດ ງົວ, ຄວາຍ ກັບ ສປປ ລາວ ຢ່າງເປັນທາງການແລ້ວ. ສະນັ້ນ, ຂໍໃຫ້ທຸກພາກສ່ວນ ຈົ່ງນຳໃຊ້ກາລະໂອກາດນີ້ ລົງທຶນສຸມໃສ່ພັດທະນາການລ້ຽງງົວ, ຄວາຍ ໃຫ້ເປັນສິນຄ້າສົ່ງອອກ ຢ່າງເອົາຈິງເອົາຈັງ ເພື່ອຕອບສະໜອງຕະຫຼາດຂອງ ສປ ຈີນ ໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ ຊຶ່ງງົວຄວາຍທີ່ ສປ ຈີນ ຕ້ອງການແມ່ນພັນໃດກໍໄດ້ ທີ່ມີນ້ຳໜັກຕັ້ງແຕ່ 350 ກິໂລກຣາມ ຂຶ້ນໄປ ແລະ ມີອາຍຸ ບໍ່ເກີນ 4 ປີ;
2. ໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ນອກຈາກສຸມໃສ່ ການວາງແຜນດ້ານການສົ່ງເສີມໃຫ້ປະຊາຊົນ ແລະ ຜູ້ປະກອບການປູກພືດ ແລະ ປູກໄມ້ ເປັນສິນຄ້າແລ້ວ ໃຫ້ສຸມໃສ່ວຽກງານສົ່ງເສີມການລ້ຽງງົວ, ຄວາຍ ເພື່ອເປັນສິນຄ້າ ທຸກຮູບແບບຢູ່ພາຍໃນ ແຂວງຂອງຕົນ ໂດຍສະເພາະຮູບແບບການລ້ຽງເປັນຟາມຕາມຫຼັກວິຊາການ ຕິດພັນກັບການສ້າງເຂດປອດພະຍາດສັດ (ງົວ, ຄວາຍ) ຢູ່ແຕ່ລະທ້ອງຖິ່ນ, ໂດຍນຳໃຊ້ທຸກທ່າແຮງທີ່ມີ ເພື່ອກຳນົດເຂດລ້ຽງງົວ, ຄວາຍ ໃຫ້ເໝາະສົມ;
3. ໃຫ້ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຈັດຕັ້ງການຝຶກອົບຮົມດ້ານເຕັກນິກວິຊາການຕ່າງໆ ໃຫ້ແກ່ປະຊາຊົນ, ຜູ້ປະກອບການ ແລະ ຜູ້ທີ່ສົນໃຈດ້ານການລ້ຽງ ງົວ, ຄວາຍ ເປັນສິນຄ້າສົ່ງອອກ ໃຫ້ໄດ້ຕາມເຕັກນິກ ແລະ ມາດຕະຖານ ທີ່ຕະຫຼາດຕ້ອງການ;
4. ໃຫ້ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສຸມໃສ່ການສົ່ງເສີມປູກຫຍ້າຊະນິດພັນຕ່າງໆ ເປັນຕົ້ນ ຫຍ້າຣູຊີ, ກີນີ, ມູລາໂຕ, ເນເປຍ, ຈຸນຊາວ, ຖົ່ວສະຕາຍໂລ ແລະ ພືດອາຫານສັດ ອື່ນໆ ເພື່ອໃຫ້ເປັນອາຫານສັດ ທີ່ມີຄຸນນະພາບ; ຄຽງຄູ່ກັນນັ້ນ ໃຫ້ມີການຊຸກຍູ້ສົ່ງເສີມ ການປູກ ແລະ ນຳໃຊ້ມັນຕົ້ນ, ສາລີ, ຖົ່ວເຫຼືອງ ແລະ ພືດໃຫ້ສານອາຫານໂປຣຕີນສູງ ເພື່ອຜະລິດເປັນອາຫານງົວ ສຳເລັດຮູບ, ຜະລິດອາຫານເສີມ ໃຫ້ງົວ, ຄວາຍ ເພື່ອບໍ່ໃຫ້ສັດກິນແຕ່ຫຍ້າພຽງຢ່າງດຽວ. ພ້ອມກັນນັ້ນ, ໃຫ້ເກັບຮັກສາ ແລະ ນຳໃຊ້ສິ່ງເສດເຫຼືອ ຈາກການປູກຝັງ ແລະ ປຸງແຕ່ງກະສິກຳ ຈຳພວກເຟືອງ, ໃບມັນຕົ້ນ, ສິ່ງເສດເຫຼືອຈາກ ການເກັບກູ້ສາລີ ແລະ ຖົ່ວເຫຼືອງ, ຍອດອ້ອຍ, ກາກນ້ຳຕານ, ກາກເຫຼົ້າ, ກາກເບຍ ປະສົມໃສ່ສູດອາຫານງົວ ປະສົມປະສານ ກັບການເກັບຖະໜອມ ອາຫານສັດໃນຍາມທີ່ຂາດແຄນ ເປັນຕົ້ນ ການເຮັດຫຍ້າແຫ້ງ, ຫຍ້າໝັກ, ເຟືອງໝັກ, ກ້ອນແຮ່ທາດ ແລະ ອາຫານເສີມ ທີ່ຈຳເປັນ ອື່ນໆ;
5. ມອບໃຫ້ ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຄົ້ນຄວ້າ, ປັບປຸງ ແລະ ຂະຫຍາຍພັນງົວ, ຄວາຍ ຢ່າງແຂງແຮງ ເພື່ອສະໜອງແນວພັນງົວ, ຄວາຍ ໃຫ້ສັງຄົມເອົາໄປລ້ຽງ ເປັນສິນຄ້າສົ່ງອອກໃຫ້ຮັບປະກັນທາງດ້ານນ້ຳໜັກ ແລະ ຄຸນນະພາບຕາມມາດຖານ ທາງດ້ານເຕັກນິກ ຂອງປະເທດຄູ່ຄ້າ;
6. ໃຫ້ກົມລ້ຽງສັດ ແລະ ການປະມົງ ສ້າງເປັນໂຄງການສົ່ງເສີມການລ້ຽງງົວ, ຄວາຍ ຢ່າງລະອຽດ ແລະ ເປັນລະບົບຄົບຊຸດ ໂດຍສົມທົບກັບ ກົມແຜນການ ແລະ ການເງິນ, ກົມນະໂຍບາຍ ແລະ ນິຕິກຳ, ສະຖາບັນ ຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ເພື່ອພັດທະນາການລ້ຽງງົວ, ຄວາຍ ເປັນສິນຄ້າໃຫ້ໄດ້ຕາມແຜນທີ່ວາງໄວ້;
7. ໃຫ້ກົມລ້ຽງສັດ ແລະ ການປະມົງ ປະສານສົມທົບກັບ ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ອອກແຈ້ງການໃຫ້ຊາວກະສິກອນ, ຜູ້ປະກອບການທີ່ມີເງື່ອນໄຂ ໃນການລົງທຶນລ້ຽງງົວ, ຄວາຍ ເປັນ

ສິນຄ້າ ໃຫ້ດຳເນີນການຂໍອະນຸຍາດ ແລະ ຂຶ້ນທະບຽນ ນຳອີງການຄຸ້ມຄອງການລ້ຽງສັດ ແລະ ສັດຕະວະແພດ ແຕ່ລະຂັ້ນຕາມ ລະບຽບການ ແລະ ໃຫ້ສ້າງຕັ້ງໜ່ວຍງານຮັບຜິດຊອບ ເພື່ອສະໜອງຂໍ້ມູນການລ້ຽງງົວ, ຄວາຍ ສົ່ງອອກ ຢູ່ກົມລ້ຽງສັດ ແລະ ການປະມົງ ແລະ ບັນດາພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ເພື່ອເປັນຈຸດສອບຖາມຂໍ້ມູນ ແລະ ອຳນວຍຄວາມສະດວກ ໃນດ້ານຕ່າງໆ ໃຫ້ຊາວກະສິກອນ ແລະ ຜູ້ປະກອບການ;

8. ໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບບັນດາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສ້າງຕາໜ່າງສັດຕະວະແພດ (ໝໍສັດ) ຢູ່ຂັ້ນບ້ານ ໃນທົ່ວປະເທດໃຫ້ຫຼາຍຂຶ້ນ, ພ້ອມທັງປຸກລະດົມ ໃຫ້ຊາວກະສິກອນ ຮູ້ຈັກການເຝົ້າລະວັງ, ຕິດຕາມ ແລະ ສັກຢາກັນພະຍາດ ງົວ, ຄວາຍ ຕາມລະດູການ ໃຫ້ເປັນປົກກະຕິ; ຄຽງຄູ່ກັນນັ້ນ, ກໍ່ໃຫ້ສຸມໃສ່ປັບປຸງ ແລະ ຍົກລະດັບ ໂຄ່ງລ່າງພື້ນຖານ ແລະ ບຸກຄະລາກອນ ໃນການກວດກາມາດຕະຖານດ້ານເຕັກນິກ, ການວິເຄາະວິໄຈພະຍາດສັດ ຂອງອົງການລັດແຕ່ລະຂັ້ນ ໃຫ້ມີປະສິດທິຜົນ;

9. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ສຳຫຼວດຜູ້ລ້ຽງງົວ, ຄວາຍ ແລະ ສະຖິຕິປະຊາກອນງົວ, ຄວາຍ ທີ່ມີໃນແຂວງຂອງຕົນ ເພື່ອວາງແຜນພັດທະນາ ແລະ ດຸ່ນດ່ຽງ ຄວາມສາມາດໃນການຜະລິດ ແລະ ສົ່ງອອກຂອງທ້ອງ ຖິ່ນຕົນໃຫ້ເໝາະສົມ ໃນແຕ່ລະໄລຍະ;

10. ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ກວດກາ ແລະ ຢັ້ງຢືນມາດຕະຖານທາງດ້ານເຕັກນິກການລ້ຽງງົວ, ຄວາຍ ຂອງບັນດາຜູ້ປະກອບການ ຕາມມາດຖານທາງດ້ານສຸຂະນາໄມສັດ ທີ່ໄດ້ຕົກລົງເປັນເອກະພາບກັບປະເທດຄູ່ຄ້າ ແລະ ກ້າວໄປເຖິງການອອກທະບຽນສົ່ງອອກ ໃຫ້ບັນດາບໍລິສັດທີ່ມີເງື່ອນໄຂ;

11. ໃຫ້ບັນດາພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ລາຍງານຂໍທິດຊີ້ນຳ ຈາກການນຳແຂວງ ກ່ຽວກັບການກຳນົດເອົາວຽກງານຊຸກຍູ້ ສົ່ງເສີມການລ້ຽງງົວ, ຄວາຍ ເປັນສິນຄ້າ ເພື່ອສົ່ງອອກ ເຂົ້າໃນແຜນງານບູລິມະສິດ ພັດທະນາເສດຖະກິດຂອງແຂວງຕົນ ແນໃສ່ສ້າງອາຊີບຄົງທີ່ ແລະ ປັບປຸງຊີວິດການເປັນຢູ່ ແກ້ໄຂຄວາມທຸກຍາກໃຫ້ປະຊາຊົນ ເທື່ອລະກ້າວ;

12. ຫ້າມບໍ່ໃຫ້ ກົມລ້ຽງສັດ ແລະ ການປະມົງ ແລະ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ອະນຸຍາດນຳເຂົ້າ ງົວ, ຄວາຍ ມາທອມໄລຍະສັ້ນ ເພື່ອສົ່ງຜ່ານອອກໄປຕ່າງປະເທດ. ແຕ່ອະນຸຍາດ ໃຫ້ນຳເຂົ້າ ງົວ, ຄວາຍ ພໍ່ພັນ-ແມ່ພັນ ແລະ ງົວ, ຄວາຍ ນ້ອຍ ອາຍຸບໍ່ເກີນ 6 ເດືອນ ໂດຍໄດ້ຮັບການຢັ້ງຢືນຢ່າງຖືກຕ້ອງຕາມລະບຽບກົດໝາຍ ຈາກຂະແໜງການກ່ຽວຂ້ອງ ເພື່ອຈຸດປະສົງມາປັບປຸງ, ຂະຫຍາຍພັນ ແລະ ສົ່ງເສີມການລ້ຽງງົວ, ຄວາຍ ໃນໄລຍະຍາວ;

13. ໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບບັນດາໂຄງການ ແລະ ຜູ້ປະກອບການ ກະກຽມສ້າງເງື່ອນໄຂໃຫ້ມີການປຸງແຕ່ງ ດ້ວຍການສ້າງໂຮງງານຂ້າສັດທີ່ໄດ້ມາດຕະຖານສາກົນ ເພື່ອແປຮູບຜະລິດຕະພັນສັດ ເປັນຊີ້ນແຫ້ງ ແລະ ຊີ້ນແຊ່ແຂງ ເພື່ອສະໜອງພາຍໃນ ແລະ ສົ່ງອອກຕ່າງປະເທດ;

14. ໃຫ້ພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຮີບຮ້ອນ ປະສານສົມທົບ ຊຶ່ງກັນ ແລະ ກັນ ເພື່ອຈັດຕັ້ງຜັນຂະຫຍາຍ ຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ ພ້ອມທັງມີການສະຫຼຸບລາຍງານ ແລະ ຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດ ໂຄງການສົ່ງເສີມການລ້ຽງງົວ, ຄວາຍ ສົ່ງອອກ ສປ ຈີນ ເປັນແຕ່ລະໄລຍະ;

15. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

**ປອ. ເພັດ ພົມພິພັກ**

**<u>ບ່ອນນຳສົ່ງ:</u>**

| | |
|---|---|
| 1. ທ່ານ ລມຕ, ຮລມຕ | 01 ສະບັບ |
| 2. ຫ້ອງການ ກະຊວງ ກປ | 01 ສະບັບ |
| 3. ກົມລ້ຽງສັດ ແລະ ການປະມົງ | 01 ສະບັບ |
| 4. ກົມແຜນການ ແລະ ການເງິນ | 01 ສະບັບ |
| 5. ບັນດາກົມວິຊາການກ່ຽວຂ້ອງ ພາກສ່ວນລະ | 01 ສະບັບ |
| 6. ເກັບມ້ຽນ | 01 ສະບັບ |